

# ອະນຸສອນສາທຸໃຫຍ່ຄຳຝັ້ນ ສີລະສັງວະໂຮ<br>ເຈົ້າອະທິການວັດສຸວັນນະຄີລີ

*ສາທຸໃຫຍ່ຄຳຝັ້ນ ສີລະສັງວະໂຮ ເກີດເມື່ອປີ 1901, ໄດ້ເປັນເຈົ້າອະທິການ ວັດສຸວັນນະຄີລີ ຕັ້ງແຕ່ປີ 1931 ຈົນເຖິງມໍລະນະພາບໃນປີ 1987. ອະນຸສອນແຫ່ງນີ້ ຈັດຕັ້ງຂຶ້ນໂດຍ ສູນຂໍ້ມູນເອກະສານຮູບພາບພະພຸດທະສາສະໜາ ເພື່ອເປັນກຽດແດ່ ພະມະຫາເຖລະ ຂອງຫຼວງພະບາງອົງນີ້ ໂດຍການຈັດການວາງສະແດງຮູບແຕ້ມ, ຮູບຖ່າຍ ແລະເອກະສານຂອງເພິ່ນ. ຮູບຫຼໍ່ເໝືອນຂອງສາທຸໃຫຍ່ຄຳຝັ້ນທີ່ຂຶ້ນພາຍຫຼັງການມໍລະນະພາບຂອງເພິ່ນກໍຈັດເປັນສ່ວນໜຶ່ງຂອງອະນຸສອນ.*

*ວັດຖຸເກົ່າແກ່ທີ່ຈັດວາງສະແດງຢູ່ໃນສະຖານທີ່ແຫ່ງນີ້ນັ້ນແມ່ນຖືກເກັບມ້ຽນໄວ້ເປັນເວລາເຖິງ 20 ປີ ຖືກຄົ້ນພົບໃນປີ 2006 ເມື່ອທີມງານຂອງສູນຂໍ້ມູນເອກະສານຮູບພາບພະພຸດທະສາສະໜາໄດ້ຮັບອະນຸຍາດໃຫ້ເປີດເບິ່ງກຸຕິຂອງສາທຸໃຫຍ່ຄຳຝັ້ນທີ່ຖືກປິດໄວ້ພາຍຫຼັງເພິ່ນມໍລະນະພາບ. ຮູບພາບ, ຟີມ, ແລະອັນລະບຳຮູບຈຳນວນຫຼວງຫຼາຍທີ່ຄົ້ນພົບປັດຈຸບັນນີ້ເປັນສ່ວນໜຶ່ງຂອງສູນຂໍ້ມູນຂອງພວກເຮົາ. ຮູບແຕ້ມສີນ້ຳຂອງເພິ່ນຈຳນວນສອງສາມແຜ່ນເທົ່ານັ້ນທີ່ພົບເຫັນ. ຫ້ອງສະໝຸດສ່ວນຕົວຂອງເພິ່ນກຳລັງຢູ່ລະຫວ່າງການຄົ້ນຄວ້າໂດຍໂຄງການທີ່ດຳເນີນການໂດຍມະຫາວິທະຍາໄລຮຳບວກ (ສະຖາບັນອາຊີ-ອາຟະລິກາ).*

*ສາທຸໃຫຍ່ຄຳຝັ້ນ ເພິ່ນເປັນອາຈານສອນທຳມະແລະບາລີ ແຕ່ຍັງເປັນນັກສິລະປິນແລະນັກສະຖາປະນິກເຊິ່ງໄດ້ອອກແບບແລະກໍ່ສ້າງວັດຫຼາຍແຫ່ງອີກດ້ວຍ. ເພິ່ນໄດ້ປະດັບຕົກແຕ່ງວັດສຸວັນນະຄີລີແລະສ້າງສາລາທຳມະວິຫານຂຶ້ນໃນຫຼວງພະບາງ. ເມື່ອເພິ່ນຍັງເປັນພະໜຸ່ມເພິ່ນໄດ້ຖືກສົ່ງໄປຮຽນຢູ່ສະຖາບັນຂອງວັດໃນບາງກອກ ປະເທດໄທເພື່ອສຶກສາທຳມະແລະພຸດທະສິລະປະ.*

*ສາທຸໃຫຍ່ຄຳຝັ້ນໄດ້ເປັນຕົວແທນຂອງທາງການລາວເຂົ້າຮ່ວມການປະຊຸມສັງຄາຍະນາທີ່ນະຄອນຢ່າງກຸ້ງ ປະເທດພະມ້າໃນປີ 1956. ເພິ່ນໄດ້ຕິດຕາມສົມເດັດພະສັງຄະລາດໄປຮ່ວມພິທີສະເຫຼີມສະຫຼອງພຸດທະຊະຍັນຕີ 2500 ທີ່ປະເທດສີລັງກາ ແລ້ວໄປທ່ອງທ່ຽວສະແຫວງບຸນນະມັດສະການພຸດທະສະຖານຕ່າງໆໃນປະເທດອິນເດຍໃນປີ 1957. ປຶ້ມບັນທຶກຂອງເພິ່ນທີ່ໄດ້ບັນທຶກການເດີນທາງຄັ້ງນີ້ປັດຈຸບັນເປັນເອກະສານສຳຄັນຂອງສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ.*

*ໃນຊ່ວງເກີດ "ສົງຄາມທີ່ບໍ່ໄດ້ປະກາດໃນລາວ" ສາທຸໃຫຍ່ຄຳຝັ້ນໄດ້ສະແດງໃຫ້ເຫັນຄວາມເມດຕາສົງສານ, ຄວາມກ້າຫານ ແລະການມີສ່ວນຮ່ວມທາງສັງຄົມ ໂດຍການເດີນທາງໄປຢ້ຽມຢາມວັດແລະເມືອງຕ່າງໆ ໃນພາກເໜືອແລະພາກຕາເວັນອອກຂອງລາວທີ່ຖືກທຳລາຍຈາກການຖິ້ມລະເບີດ. ເພິ່ນໄດ້ບູລະນະພຸດທະສະຖານຫຼາຍແຫ່ງທີ່ຖືກທຳລາຍພ້ອມທັງປອບໃຈຊາວບ້ານຜູ້ທີ່ໄດ້ຮັບບາດເຈັບຫຼືສູນເສຍຄົນທີ່ຕົນຮັກໄປ. ເພິ່ນຍັງໄດ້ພະຍາຍາມປົກປັກຮັກສາມໍລະດົກແລະຮີດຄອງປະເພນີທາງພະພຸດທະສາສະໜາໃຫ້ແກ່ປະຊາຊົນຜູ້ທີ່ບໍ່ມີບ່ອນຢູ່ອາໄສນີ້. ສຳລັບພິທີຊາປະນະກິດສົບຂອງສາທຸໃຫຍ່ຄຳຝັ້ນໃນວັນທີ 18 ມັງກອນ 1987 ນັ້ນ ແມ່ນຈັດໃສ່ສະຖານທີ່ສຳລັບຈັດພິທີເກົ່າແກ່ທີ່ເດີ່ນທາດຫຼວງ ເຊິ່ງໄດ້ຈັດຂຶ້ນເປັນຄັ້ງທຳອິດ ນັບແຕ່ພາຍຫຼັງການປົດປ່ອຍ. ມີບຸກຄົນສຳຄັນຂອງພັກແລະລັດຫຼາຍທ່ານ ພ້ອມທັງ ພະສົງສາມະເນນ ແລະປະຊາຊົນຈຳນວນຫຼວງຫຼາຍໄດ້ຊ່ວຍຈັດພິທີຊາປະນະກິດສົບນີ້ໃຫ້ເພິ່ນ.*

*ຈົນມາເຖິງປັດຈຸບັນ, ປະຊາຊົນຊາວບ້ານຄີລີແລະຍາດພີ່ນ້ອງຂອງສາທຸໃຫຍ່ຄຳຝັ້ນຍັງມີຄວາມຈົດຈຳແລະຮູ້ສຶກກະຕັນຍູຮູ້ຄຸນຢ່າງເລິກເຊິ່ງຕໍ່ພະມະຫາເຖລະຂອງຫຼວງພະບາງອົງນີ້.*

*ການວາງສະແດງຈັດຂຶ້ນສຳລັບສູນຂໍ້ມູນເອກະສານຮູບພາບພະພຸດທະສາສະໜາຫຼວງພະບາງ*
*ພາຍໃຕ້ການອຸປະຖຳຂອງສາທຸໃຫຍ່ອ່ອນແກ້ວ ກິດຕິພັດໂທ*
*ໂດຍ ຮັນສ໌ ເກອອກເບີເກີ ແລະ ຄຳວອນ ບຸນຍະພອນ ຜູ້ຊ່ວຍ ບຸນຊູ ໄຊທຳ*
*ຈາກການຄົ້ນຄວ້າ ພາຍໃຕ້ ໂຄງການເອກະສານທີ່ຢູ່ໃນສະພາບຊຸດໂຊມຂອງຫໍສະໝຸດອັງກິດ (2006-2010)*
*ອອກແບບກຣາບຟິກ ໂດຍ ແອນນາ ໄວລ໌, ບໍລິຫານ ໂດຍ ໄບລອັນ ລິງແຮມ, ດອກພອກ ໂດຍ ເຈົ້ານິດຖະຄົງ ສົມສະນິດ.*
*ຫໍວາງສະແດງໄດ້ຮັບການບູລະນະໂດຍໂຄງການມໍລະດົກພະພຸດທະສາສະໜາ ດ້ວຍທຶນເພື່ອແພ່ຈາກມູນນິທິບາດົວ, ນະຄອນລອນດອນ.*

* * * * *

ຖ້າທ່ານຕ້ອງການເຂົ້າຊົມ ກະລຸນາໃສ່ໃຈວ່າທ່ານກຳລັງເຂົ້າສູ່ສະຖານທີ່ສັກສິດທີ່ຊາວພຸດເຄົາລົບແລະສັກກາລະບູຊາ.
ກະນຸລາຖອດເກີບ, ແຕ່ງຕົວໜິດຊິດ, ເວົ້າແລະປະຕິບັດໂດຍຄວາມສຸພາບ.
ຂໍໃຫ້ແສງສະຫວ່າງແຫ່ງຄຳສອນຂອງພະພຸດທະເຈົ້າຈົ່ງຍົກລະດັບຄວາມຮູ້ແລະຄວາມກ້າຫານຂອງທ່ານຈົນສາມາດລະງັບເສຍເຊິ່ງຄວາມທຸກທັງມວນທັງຕົວທ່ານແລະຜູ້ທີ່ທ່ານຮັກ.